# ການລາຍງານ ແລະ ການເປີດເຜີຍຂໍ້ມູນ
# ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

*ຄັດຈາກວາລະສານ ການທະນາຄານ ສະບັບທີ 6 ປີ 2015, ໜ້າ 36*

*ຂຽນໂດຍ: ທ່ານ ນາງ ພິດສາຄອນ ສໍສະຫວັນ ພະນັກງານວິຊາການ ສຳນັກງານ ຄຄຊ*

ທ່ານຮູ້ບໍ່ວ່າ ພາຍຫຼັງ ບໍລິສັດອອກຈຳໜ່າຍຫຼັກຊັບ ສຳເລັດການຂາຍຫຼັກຊັບຂອງຕົນເອງ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບແລ້ວ ບໍລິສັດດັ່ງກ່າວຕ້ອງໄດ້ ລາຍງານ ແລະ ເປີດເຜີຍຂໍ້ມູນໃນຮູບແບບໃດ? ຜູ້ຂຽນເຊື່ອວ່າບັນດາທ່ານກໍ່ອາດຈະໄດ້ອ່ານ ແລະ ມີຄວາມເຂົ້າໃຈແດ່ແລ້ວບໍ່ຫຼາຍກໍ່ໜ້ອຍແລ້ວ.

ອີງຕາມ "ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ" ສະບັບເລກທີ 007 ລົງວັນທີ 03 ເມສາ 2014 ໄດ້ກຳນົດວ່າ: ການລາຍງານ ແມ່ນການລາຍງານການເຄື່ອນໄຫວທຸລະກິດຂອງຕົນໃຫ້ແກ່ອົງການຄຸ້ມຄອງວຽກງານຫຼັກຊັບ ເພື່ອຮັບຊາບ ແລະ ຕິດຕາມກວດກາ. ແລະ ການເປີດເຜີຍຂໍ້ມູນ ແມ່ນ ເປີດເຜີຍຂໍ້ມູນທີ່ມີຜົນກະທົບຕໍ່ການປ່ຽນແປງຂອງລາຄາຫຼັກຊັບ, ຂໍ້ມູນທີ່ມີຜົນຕໍ່ການຕັດສິນໃຈຂອງຜູ້ລົງທຶນ ລວມທັງຂໍ້ມູນທີ່ເຕະຕ້ອງເຖິງສິດຜົນປະໂຫຍດຂອງຜູ້ລົງທຶນ ເພື່ອໃຫ້ມວນຊົນຮັບຊາບ. ພ້ອມນັ້ນ, ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຍັງມີພັນທະທີ່ຕ້ອງຮັບຜິດຊອບຕໍ່ເນື້ອໃນທີ່ໄດ້ລາຍງານ ແລະ ເປີດເຜີຍດັ່ງກ່າວ.

ເພື່ອຍັ້ງຢືນ ແລະ ອຳນວຍຄວາມສະດວກໃຫ້ແກ່ການລາຍງານ ແລະ ການເປີດເຜີຍຂໍ້ມູນ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບວຽກງານລາຍງານ ແລະ ການເປີດເຜີຍຂໍ້ມູນຢ່າງນ້ອຍ 2 ຄົນ, ໜຶ່ງໃນຜູ້ຮັບຜິດຊອບລາຍງານ ແລະ ເປີດເຜີຍຂໍ້ມູນ ທີ່ຖືກແຕ່ງຕັ້ງຕ້ອງແມ່ນຮອງຜູ້ອຳນວຍການໃຫຍ່ຜູ້ຊີ້ນຳວຽກງານການເງິນ.

ສຳລັບຊ່ອງທາງຂອງ ການລາຍງານມີ ສອງ ຊ່ອງທາງຄື: ເປັນລາຍລັກອັກສອນ ແລະ ເປັນເອເລັກໂຕຣນິກຊຶ່ງລາຍງານໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ການເປີດເຜີຍຂໍ້ມູນ ແມ່ນຕ້ອງເປີດເຜີຍຂໍ້ມູນ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ. ນອກຈາກນີ້ ຍັງສາມາດເປີດເຜີຍຂໍ້ມູນຜ່ານເວັບໄຊຂອງບໍລິສັດຕົນເອງ ຫຼື ຜ່ານພາຫະນະສື່ມວນຊົນອື່ນຕາມຄວາມເໝາະ, ແຕ່ການເປີດເຜີຍຂໍ້ມູນດັ່ງກ່າວຕ້ອງເປີດເຜີຍພາຍຫຼັງໄດ້ເປີດເຜີຍຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ.

ພ້ອມນີ້, ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງກັບການລາຍງານ ແລະ ການເປີດເຜີຍຂໍ້ມູນ ຢ່າງໜ່ອຍ 10 ປີ.

ຮູບແບບການລາຍງານ ແລະ ການເປີດເຜີຍຂໍ້ມູນປະກອບມີ 4 ຮູບແບບຄື:

1. ແບບປົກກະຕິ ແມ່ນ: ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕາມງວດເວລາ ປະກອບມີ: ປະຈຳໄຕມາດ , ຫົກເດືອນຕົ້ນປີ ແລະ ປະຈຳປີ.
2. ແບບກະທັນຫັນ ແມ່ນການລາຍງານ ແລະ ການເປີດເຜີຍຂໍ້ມູນຕາມເຫດການໃດໜຶ່ງທີ່ເກີດຂຶ້ນ ປະກອບມີ ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນ 24 ຊາວສີ່ຊົ່ວໂມງ ໃນວັນລັດຖະການ, ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນ 72 ຊົ່ວໂມງ ໃນວັນລັດຖະການ ແລະ ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນ 14 ວັນ ນັບແຕ່ວັນເປີດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ.
3. ແບບຕາມການຮຽກຮ້ອງ ແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການຮຽກຮ້ອງ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
4. ແບບຄວາມສະໝັກໃຈ ແມ່ນການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງບໍລິສັກອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົນທະບຽນ ຕ້ອງການໃຫ້ຜູ້ຄຸ້ມຄອງ ແລະ ຜູ້ລົງທຶນຮັບຮູ້ກ່ຽວກັບຂໍ້ມູນດັ່ງກ່າວ ເພື່ອທີ່ຈະໄດ້ຮັບຂໍ້ມູນຂ່າວສານຢ່າງທົ່ວເຖິງ.

ພ້ອມກັນນີ້, ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງຊີ້ແຈງ ແລະ ຢືນຢັນກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ ທີ່ຜູ້ລົງທຶນໄດ້ຮັບຜ່ານຊ່ອງທາງໃດໜຶ່ງ ເຊັ່ນ: ບົດຄວາມທີ່ເຜີຍແຜ່ຜ່ານພາຫະນະສື່ມວນຊົນຕ່າງໆ, ລາຍງານການດຳເນີນທຸລະກິດຂອງບໍລິສັດ ແລະ ຂໍ້ມູນທີ່ເປັນຂ່າວລືຕ່າງໆ ເຖິງວ່າ ຂໍ້ມູນດັ່ງກ່າວຈະມີຄວາມຈິງ ຫຼື ບໍ່ມີຄວາມຈິງ, ມີຜົນ ຫຼື ບໍ່ມີຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ຕໍ່ການຕັດສິນໃຈຂອງຜູ້ລົງທຶນ.

ທ່ານສາມາດເປີດເຜີຍຂໍ້ມູນ ແລະ ຕິດຕາມຂໍ້ມູນທີ່ບໍລິສັດຈົດທະບຽນເປີດເຜີຍ ທັງໝົດໄດ້ທີ່ www.Lsx.com.la ແລະ ສຶກສາຂໍ້ມູນເພີ່ມເຕີມ ຫຼື ດາວໂຫລດ “ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ” ສະບັບເລກທີ 007 ລົງວັນທີ 03 ເມສາ 2014 ໄດ້ທີ່ເວບໄຊ www.Lsc.gov.la; www.BOL.gov.la; www.Lsx.com.la ຫຼື ຕິດຕໍ່ມາຍັງພວກເຮົາໂດຍກົງໄດ້ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂທ: 021 217770, ແຟັກ: 021 217806 **“ພວກເຮົາພ້ອມແລ້ວ ທີ່ຈະເປັນສ່ວນໜຶ່ງໃນການໃຫ້ຄວາມຮູ້ກ່ຽວກັບຫຼັກຊັບໃຫ້ແກ່ທ່ານ”**